PetroTrade

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY

ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ 0031 /ປທລ/2020
ນະຄອນຫຼວງວຽງຈັນ, ວັນທີ: 12/5/2020

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

- ອີງຕາມ ກົດລະບຽບ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະບັບ ລົງວັນທີ 13 ຕຸລາ 2014;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 1/2020 ວັນທີ 13 ມີນາ 2020;
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 2/2020 ວັນທີ 27 ມີນາ 2020.
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ສະບັບເລກທີ 0022/ປທລ/2020 ລົງວັນທີ 3 ເມສາ 2020.
- ອີງຕາມ ແຈ້ງການ ເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ປທລ ສະບັບເລກທີ 0025/ປທລ/2020 ລົງ ວັນທີ 20 ເມສາ 2020.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື " ປທລ") ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເຊິ່ງຈະໄດ້ຈັດຂຶ້ນໃນ **ວັນທີ 29 ພຶດສະພາ 2020, ເວລາ 09:30 ໂມງ (ເລີ່ມລົງທະບຽນເວລາ 08:30 ໂມງ)**, ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບ ລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມ ວາລະກອງປະຊຸມທີ່ໄດ້ແຈ້ງເປັນລາຍລະອຽດໃນໜັງສືເຊີນເຂົ້າຮ່ວມກອງປະຊຸມສະບັບກ່ອນໜ້ານີ້.

ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ຜ່ານເວັບໄຊຂອງຕະຫຼາດຫຼັກ ຊັບລາວ (www.lsx.com.la)

ຫວັງຢ່າງຍິ່ງວ່າ ທ່ານຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ้งນີ้ด้วย.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ